ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ ..1645.. /ຍທຂ.

ບໍລິຄໍາໄຊ, ວັນທີ 10 ເມສາ 2026

# ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາ ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໃນການຕິດຕາມກວດກາເປັນທີ່ປຶກສາຂອງໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນແບບລຽນຫີນແຄມນໍ້າຂອງ ບ້ານທົ່ງນ້ອຍ ເມືອງປາກກະດິງ ແຂວງບໍລິຄໍາໄຊ ມີຄວາມຍາວ 1.800 ແມັດ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງລົງທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງບໍລິຄໍາໄຊ ສະບັບເລກທີ 103/ຂບຊ, ລົງວັນທີ 11 ມີນາ 2026, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ ຂະແໜງທາງນໍ້າ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ;
- ອີງຕາມ ໜັງສືແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026 ຂອງປະທານຄະນະກໍາມະການປົກຄອງແຂວງ ສະບັບເລກທີ 07/ຄປຂ, ລົງວັນທີ 27 ມີນາ 2026 (ຄັ້ງທີ 2);

**ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ** ຂໍຖືເປັນກຽດຮຽນເຊີນ: ບັນດາບໍລິສັດ, ລັດວິສາຫະກິດ ທີ່ດໍາເນີນຫືວໜ່ວຍພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈໃນການຕິດຕາມກວດກາໂຄງການເປັນທີ່ປຶກສາໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ແຄມນໍ້າຂອງ ແບບລຽນຫີນ ບ້ານທົ່ງນ້ອຍ ເມືອງປາກກະດິງ, ແຂວງ ບໍລິຄໍາໄຊ ສໍາລັບຜູ້ເຂົ້າຮ່ວມປະມູນຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

1. ບໍລິສັດຕ້ອງມີປະສົບການດ້ານທີ່ປຶກສາໂຄງການກໍ່ສ້າງປ້ອງກັນຕາຝັ່ງ ຫຼື ຄ້າຍຄືຢ່າງນ້ອຍ 3 ປີຂຶ້ນໄປ;
2. ບໍລິສັດມີອຸປະກອນຮັບໃຊ້ກ່ຽວກັບການກວດກາຄຸນນະພາບ ແລະ ບໍລິມາດວຽກຄົບຊຸດ;
3. ມີບຸກຂະລາກອນທີ່ມີປະສົບການ 3 ປີຂຶ້ນໄປ ຊໍານານງານກ່ຽວກັບການຄວບຄຸມບໍລິມາດການກໍ່ສ້າງປ້ອງກັນຕາຝັ່ງ;
4. ບໍລິສັດ ຕ້ອງມີພາຫານະຮັບໃຊ້, ນໍ້າມັນເຊື້ອໄຟ, ເຄື່ອງໃຊ້ຫ້ອງການ ແລະ ສິ້ນເປືອງຕ່າງໆເປັນຂອງຕົນເອງ;
5. ບໍລິສັດ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນກ່ຽວກັບການສະເໜີການບໍລິການທີ່ປຶກສາ ດັ່ງກ່າວນີ້

ຢູ່ທີ່ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ຂະແໜງທາງນ້ຳ ແລະ  ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ຕາມໂມງລັດຖະການ 08:00 ໂມງ ຫາ 12:00 ແລະ 13:00 ແລະ 16:00 ໂມງ, ວັນຈັນ ເຖິງ ວັນສຸກ;

6. ເລີ່ມຂາຍຊອງປະມູນວັນທີ່ 10 ເມສາ ຫາ 20 ພຶດສະພາ 2026;
7. ມື້ເປີດຊອງປະມູນຈະໄດ້ຈັດຂຶ້ນໃນ ເວລາ 14:00 ໂມງ, ຂອງວັນທີ່. 21 ພຶດສະພາ 2026 ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ບໍລິຄຳໄຊ, ສຳລັບຊອງປະມູນຈະຕ້ອງຍື່ນເຖິງພະແນກໂຍທາທິການ ແລະ ຂົນສົ່ງ ເວລາ 1:30 ໂມງ, ຖ້າຊອງປະມູນໃດຫາກສົ່ງຊ້າກ່ວາເວລາທີ່ກຳນົດໄວ້ ແມ່ນຈະໄດ້ຖືກສົ່ງກັບ ແລະ ບໍ່ມີການເປີດຊອງດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຮັບຊາບ ແລະ ເຂົ້າຮ່ວມການຄັດເລືອກຄຸນນະວຸດທິຕາມແຈ້ງການດັ່ງກ່າວນີ້ດ້ວຍ.

ຫົວໜ້າພະແນກ

ກະຊວງໂຍທາທິການ ແລະ ຂົນສົ່ງ
ພະແນກ ໂຍທາທິການ ແລະ ຂົນສົ່ງ
ແຂວງບໍລິຄຳໄຊ

ທອງລິດ ພອງສີນວນ

ເບີໂທຕິດຕໍ່:

ທ່ານ ວົງເດືອນ ກິ່ງກິດຕິສັກ 020 55269283 ຂະແໜງທາງນ້ຳ ພະແນກ ຍທຂ ແຂວງ

ທ່ານ ຄຳປະເສີດ ພັນນະວົງ 020 28870055 ຂະແໜງການຈັດຊື້-ຈັດຈ້າງ ພະແນກການເງິນ ແຂວງ